# ແຜນກູ້ພັຍໄພລາມປ່າເກາະມາວອີ

## ການເລື່ອນເວລາ ກວດລ້າງເຂດທີ່ດິນ ໃນໂຄງການ ຊ່ວງທີ 1

*ໂຄງການກວດລ້າງພຊ່ວງທີ 1 ຖືກເລື່ອນອອກໄປໂດຍກົມສງວນສິ່ງແວດລ້ອມ ໝາຍຄວາມວ່າທາງກົມຍັງບໍ່ທັນສາມາດທີ່ຈະຍົກຍ້າຍເສດເຜົາໄໝ້ຕ່າງໆນັ້ນໄດ້ເທື່ອ. ທາງພະແນກກອງທັບກົມວິຊະວະວັສະດຸ ຈະທຳການປະຕິບັດໃນຂັ້ນຕອນ ຊ່ວງທີ 2.*

**ພຶສະຈິກາ 20, 2023**

*ເກາະມາວອີໄດ້ຕອບສນອງແກ່ຊາວໂລກຢ່າງຫຼວງຫຼາຍ. ໃນນາມແຂກຢ້ຽມຢາມ, ຖືເປັນກຽດໃຫ້ການອູ້ມຊູເປັນການຕອບແທນ.*

*ກົມກອງບໍຣິຫານຄວບຄຸມການກູ້ໄພພາວະສຸກເສີນແຫ່ງຊາດ ໄດ້ ມອບໜ້າທີ່ໃຫ້ ກົມສງວນສິ່ງແວດລ້ອມ EPA ທຳການສຳຣວດ,ຍົກຍ້າຍ,ແລະຊຳລະກວດມ້ຽນເສດທີ່ເປັນພິດແລະອັນຕະຣາຍທຸກຢ່າງ. ຊ່ວງນີ້ເອີ້ນວ່າ ຊ່ວງທີ 1 (Phase 1). ເຂດທີ່ດິນທີ່ຖືກ  ໝາຍບອກວ່າ ທີ່ຍັບຍັ້ງແລະຖືກເລື່ອນ ຊ່ວງທີ 1 ເມື່ອກົມສງວນສິ່ງແວດລ້ອມ ບໍ່ສາມາດຍົກຍ້າຍເສດສານພິດອອກໄປຈາກທີ່ ຍ້ອນວ່າສະພາບຂອງວັດຖຸນັ້ນເຫັນວ່າບໍ່ປອດໄພ. ເພິ່ນຈະຕິດປ້າຍທີ່ຂຽນບອກວ່າ "ຖືກເລື່ອນເວລາ" ("Deferred") ຢູ່ຕາມສະຖານ ທີ່ທຸກບ່ອນ.*



**ທີ່ດິນຂອງຂ້ອຍຖືກເອີ້ນເວລາ, ແລ້ວດຽວນີ້ເພິ່ນຈະເຮັດຫຍັງ?**

ຍ້ອນສະພາບຂອງທີ່ດິນ, ເຈົ້າໜ້າທີ່ກົມ EPA ປະຈຳສະນາມ ແລະຜູ້ຮັບເໝົາ ບໍ່ສາມາດທີ່ຈະເຂົ້າໄປໄດ້ຢ່າງປອດໄພ ເພື່ອກວດລ້າງເສດສານພິດ. ພະນັກງານບໍ່ສາມາດເຂົ້າໄປໃນພື້ນທີ່ໄດ້ຍ້ອນ ບັນຫາຫຼາຍປະເດັນ ທີ່ເປັນອັນຕະຣາຍ, ເຊັ່ນວ່າ ທາງຂ້າງເບື້ອງເທິງເໜືອຫົວອາດເປັນອັນຕະຣາຍ, ຕົ້ນໄມ້ຫັກລົ້ມລົງ, ພື້ນທີ່ດິນຫຼຸບລົ່ມ (ເປັນສິ່ງກີດກັ້ນທາງເຂົ້າ), ໂຄງຮ່າງຂອງຕຶກອາຄານບໍ່ແໜ້ນໜາ, ແລະສະພາບອື່ນໆທີ່ເຫັນວ່າບໍ່ປອດໄພ (ເຊັ່ນພື້ນເຮືອນຍຸບເພພັງ, ຫຼັງຄາໂຍດ, ພາກສ່ວນຕຶກຂະນານໃຫຍ່ອາດບົກຄຸມດ້ວຍ ແອສແບສຕັດສ໌ (asbestos),ແລະສິ່ງອື່ນໆ (etc.).

*ວັດຖຸເປັນສານພິດອາດຈະບົກຄຸມຢູ່ທົ່ວໄປໃນທີ່ດິນຕາມເຄຫາສະຖານ* ຊຶ່ງຈະກາຍເປັນໄພຕໍ່ສຸຂພາບ. ຂີ້ເຖົ່າແລະສິ່ງເສດເຜົາໄໝ້ຈະມີສານພິດ ເຊັ່ນແອສແບສຕັດສ໌, ກົ່ວ ເລະສິ່ງເປັນພິດເບື່ອເມົາ ທີ່ສາມາດເຂົ້າທາງຫຼອດລົມຫາຍໃຈ ຫຼືຖືກພັດອອກໄປຈາກທີ່ເດີມດ້ວຍລົມຍາມຖືກແຕະຕ້ອງ. ທີ່ດິນບາງແຫ່ງອາດຈະມີຢາກັນດິນເຈື່ອນ ສີດໃສ່ແລ້ວເພື່ອປ້ອງກັນໄວ້.

**ຂັ້ນຕໍ່ໄປສຳລັບທີ່ດິນຊຶ່ງ "ຖືກເອີ້ນເວລາ" ຈະເປັນຢ່າງໃດ?**

ການຊຳລະກວດລ້າງສິ່ງທີ່ເປັນສານພິດໃນພື້ນທີ່ດິນຊຶ່ງ "ຖືກເອີ້ນເວລາ" ຈະເປັນພາລະຂອງທາງຜະແນກກອງທັບ ກົມວິຊະວະວັສະດຸ (Army Corps) ທີ່ຈະທຳການປະຕິບັດໃນຂັ້ນຕອນ ຊ່ວງທີ 2. ຄົນທ້ອງຖິ່ນຈະຕ້ອງປະສານງານຮ່ວມກັບກອງ ທັບ ກົມວິຊະວະວັສະດຸ ໃນການຍົກຍ້າຍເສດເຄື່ອງເຜົາໄໝ້ ແລະຊອກຄົ້ນສິ່ງຂອງທີ່ຖືກຖົມຢູ່ກ້ອງຂີ້ເຖົ່າ. ຕິດຕໍ່ຫາ ກອງທັບກົມວິຊະວະວັສະດຸໄດ້ທີ່ສູນກາງເກັບມ້ຽນເຄື່ອງເສດ (Army Corps Debris Center) ທີ່ (877) 214-9117, ລະວ່າງ 6:00AM ຫາ 6:00PM ໄດ້ທຸກວັນ.

# ທີ່ດິນຊຶ່ງ "ຖືກເອີ້ນເວລາ" ຊ່ວງທີ 1 ອາດຈະມີສິ່ງເປັນພິດບົກຄຸມຢູ່ ແລະສິ່ງອັນຕະຣາຍອື່ນໆ.

# ຈົ່ງໃຊ້ຄວາມລະມັດລະວັງຢ່າງສຸດຂີດ ຍາມເຂົ້າໄປນະສະຖານທີ່ແຫ່ງນີ້.